# ໂຮງຮຽນວັນອາທິດ

## ວັນອາທິດ ທີ 4 ກໍຣະກະດາ 2010 (7/4/2010 )

## ພລັງຂອງການຕັດສິນໃຈ

**ຂໍ້ພຣະຄັມພີໃນບົດຮຽນ:** 1 ຊາມູເອນ 13:8-14; 16:6-13

**ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?**

ທ່ານຈະສຳນຶກໄດ້ວ່າພຣະເຈົ້າໄດ້ເລືອກເອົາທ່ານເພື່ອການຮັບໃຊ້ເພາະເນື່ອງດ້ວຍເຫດຜົນອັນນີ້ພຣະອົງຈຶ່ງຊົງສະຖິດຢູ່ໃນທ່ານ.

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ:**

ບົດຮຽນນີ້ແມ່ນກ່ຽວກັບການເລືອກເອົາຊາຍຄົນນຶ່ງຕາມພຣະປະສົງຂອງພຣະອົງເພື່ອຈະໃຫ້ເປັນກະສັດອົງໃໝ່ແທນກະສັດຊາອູນແລະຄຳສັ່ງສອນຂອງພຣະເຈົ້າທີ່ຈະສຳຣວດກວດເບິ່ງຈິດໃຈພາຍໃນຫຼາຍກວ່າປາກົດການທີ່ປາກົດຂຶ້ນພາຍນອກ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:**

ຄົນທີ່ເປັນຜູ້ໃຫຍ່ແລ້ວມັກຄິດສເມີວ່າພວກເຂົາເປັນຄົນທີ່ໃຊ້ການໄດ້ຕໍ່ພຣະເຈົ້າ ເຂົາຈະເຮັດທຸກສິ່ງໃຫ້ເປັນທີ່ພໍພຣະທັຍພຣະເຈົ້າ(ປາກົດການພາຍນອກ) ແທນທີ່ຈະເປັນກະທຳທີ່ເກີດຈາກຈິດໃຈ (ລັກສະນະພາຍໃນ). ມາດຕະຖານຂອງພຣະເຈົ້າແມ່ນພື້ນຖານສ່ວນໃນສຸດຂອງຈິດໃຈ.

ໃນລະຫວ່າງການປະຕິວັດຕໍ່ສູ້(ເອົາເອກຣາດ). ປະຊາຊາດທີ່ໄດ້ຮັບການປົດປ່ອຍມີສິດທີທີ່ຈະເລືອກເອົາພັກຝ່າຍໃດຝ່າຍນຶ່ງທີ່ເຂົາສົມຄວນຈະໃຫ້ຄວາມຈົງຮັກພັກດີ. ບາງພວກເລືອກທີ່ຈະໃຫ້ຄວາມຈົງຮັກພັກດີຕໍ່ອັງກິດ, ແລະພວກອື່ນແມ່ນເລືອກທີ່ຈະຂຶ້ນກັບພັກຝ່າຍຜູ້ຮັກຊາດ ຜູ້ຊຶ່ງສ່ຽງພັຍອັນຕະຣາຍເພື່ອຄວາມມີອິສຣະພາບຂອງພວກເຂົາ ແລະຢືນຢູ່ຕໍ່ສູ້ກັບກອງທະຫານທີ່ຕິດອາວຸດສົງຄາມຄົບຊຸດໃນເວລານັ້ນ. ໃນວັນເອກຣາດນີ້, ປ່ອຍໃຫ້ເປັນໂອກາດໃນການເລືອກດ້ວຍຄວາມສັດຊື່ໂດຍຜູ້ທີ່ຮັກຊາດ.

ກະສັດຊາອູນມີສິດທີທີ່ຈະເລືອກຄືກັນ. ໃນຂະນະທີ່ປະຊາຊົນໄດ້ເລືອກເອົາເພິ່ນເປັນກະສັດອົງທຳອິດຂອງອິສຣາເອນ, ທ່ານເປັນຜູ້ທີ່ເໝາະສົມທີ່ສຸດ, ຄວາມສູງໃຫຍ່ແລະລັກສະນະທ່າທາງຂອງເພິ່ນເບິ່ງແລ້ວເຮັດໃຫ້ປະຊາຊົນຄິດວ່າພວກເຂົາໄດ້ເລືອກເອົາຜູ້ມີປັນຍາເປັນກະສັດ. ແນ່ນອນ, ພວກເຂົາເບິ່ງເຫັນແຕ່ປາກົດການພາຍນອກເຂົາບໍ່ໄດ້ເຫັນສິ່ງທີ່ຊຸກຊ້ອນຢູ່ຂ້າງໃນ (1 ຊາມູເອນ 10:22). ຊາອູນເລືອກທີ່ຈະເປັນກະສັດທີ່ເຂັ້ມແຂງຕາມຄວາມນຶກຄິດຂອງປະຊາຊົນຫຼືບໍ່, ຫຼືທ່ານຈະເປັນກະສັດທີ່ໜ້າຢ້ານກົວ, ກະສັດທີ່ເປັນໜ້າຢ້ານກົວຄືກະສັດຜູ້ທີ່ບໍ່ຮູ້ໃນຄວາມຮັບຜິດຊອບຂອງຕົນ.

## ສຶກສາພຣະຄັມພີ

**1. ການເລືອກຂອງຂ້ອຍ** 1 ຊາມູເອນ 13:8-14

ຊາອູນຂຶ້ນເປັນກະສັດເມື່ອອາຍຸສາມສິບປີ, ແລະປົກຄອງເປັນເວລາ 42 ປີ. ຊາວຟີລິສຕິນທີ່ຫຼົບໜີໄປໃນຂະນະທີ່ຊາມູເອນເປັນຜູ້ປະກາດພຣະທັມຢູ່ນັ້ນໄດ້ກັບມາຂົ່ມຂູ່ເຂົາ. ຊາວຟີລິສຕິນໄດ້ຫ້ອມໂຮມທະຫານ ຣົດຮົບ 3,000 ຄັນ ແລະທະຫານມ້າ 6,000 ຄົນ ພ້ອມທະຫານເປັນຈໍານວນຫຼວງຫຼາຍ (1 ຊາມູເອນ 13:5). ກະສັດຊາອູນຕົກໃຈຍ້ານກົວໃນຂະນະທີ່ທະຫານໄດ້ເລີ້ມຫັນໜີຈາກເພິ່ນ.

ຊາມູເອນໄດ້ໃຫ້ຄໍາໝັ້ນສັນຍາວ່າຈະກັບມາເມືອງກິນການອີກໃນອາທິດນັ້ນແລະຈະ**ເຜົາເຄື່ອງຖວາຍບູຊາ**ແລະ**ນະມັສການພຣະເຈົ້າ**ຢູ່ທີ່ນັ້ນ. ໃນທັນໃດເຈັດມື້ກໍຜ່ານໄປ, ຊາອູນຂາດຄວາມໝັ້ນໃຈ. ຊາອູນຮ້ອງບອກໃຫ້ຄົນນໍາເອົາເຄື່ອງເຜົາຖວາຍບູຊາມາໃຫ້ພຣະອົງແລະພຣະອົງກໍເຜົາຖວາຍເຄື່ອງບູຊານັ້ນໃຫ້ກັບອົງພຣະຜູ້ເປັນເຈົ້າ. ໃນຂະນະທີ່ຊາອູນ**ເສັດພິທີ**, ຊາມູເອນກໍມາຮອດພໍແຕ່ຊາອູນເວົ້າຂຶ້ນ. ທ່ານບໍ່ໄດ້ມີຄວາມພາກພູມໃຈໃນການກະທໍາຂອງຊາອູນເລີຍ. ແນ່ນອນ, ທ່ານໄດ້ເຂົ້າໄປຖາມໂດຍກົງ, **ພຣະອົງກໍາລັງເຮັດຫຍັງ**? ຊາມູເອນຮູ້ວ່າຊາອູນໄດ້ຕັດສິນໃຈຜິດພາດ

> ບາງເວລາພວກເຮົາກໍມີໃຈຟັ່ງຟ້າວຫຼືໃຈຮ້ອນໃນການຕັດສິນໃຈ. ແທນທີ່ເຮົາຈະລໍຖ້າອົງພຣະຜູ້ເປັນເຈົ້າຫຼືຄົນຂອງພຣະອົງ, ພວກເຮົາພັດບໍ່ໄດ້ລໍຖ້າຕັດສິນໃຈເຮັດທຸກຢ່າງດ້ວຍຕົວເຮົາເອງ. ແຕ່ຖ້າພຍາຍາມເຮັດໃນວິທີທາງຂອງພຣະເຈົ້ານັ້ນເຮົາຈະບໍ່ຮູ້ສຶກເສັຽໃຈ. ບາງເວລາ, ພວກເຮົາກໍຮູ້ສຶກວ່າຖືກລົບກວນຈາກສິ່ງໃດສິ່ງນຶ່ງເຮັດໃຫ້ເຮົາຕ້ອງມີການຕັດສິນໃຈຜິດພາດ.

ປະການທີນຶ່ງ, ຊາອູນກ່າວໂທດຕໍາໜິວ່າ**ທະຫານ**ຂອງເພິ່ນໄດ້ຫັນໜີຈາກເພິ່ນ. ປະການທີສອງ, ຊາອູນກ່າວໂທດຕໍາໜິຊາມູເອນວ່າເພິ່ນບໍ່ຮັກສາຄໍາໝັ້ນສັນຍາວ່າຈະກັບມາໃນວັນທີເຈັດ. ຊາມູເອນໄດ້ຮັກສາຄໍາໝັ້ນສັນຍາຂອງເພິ່ນແຕ່ຊາອູນຂາດຄວາມອົດທົນມີໃຈຫຸນຫັນພັນແລ່ນ. ປະການທີສາມ, ຊາອູນກ່າວໂທດໃສ່ກອງທັບຊາວຟີລິສຕິນ; ທ່ານໄດ້ມີຄວາມຫວາດກົວວ່າເຂົາຈະເຂົ້າມາບຸກໂຈມຕີຢ່າງກະທັນຫັນ. ສຸດທ້າຍ, ຊາອູນຍັງກ່າວໂທດໃສ່ພຣະເຈົ້າ, ເພາະວ່າເພິ່ນບໍ່ໄດ້ຄິດເລີຍວ່າພຣະເຈົ້າໄດ້ກະຕຸ້ນຄວາມສົນໃຈຂອງເພິ່ນຈົນກວ່າເພິ່ນໄດ້ພົບພຣະເຈົ້າໂດຍຜ່ານທາງພິທີເຜົາເຄື່ອງບູຊາຖວາຍ. ຊາອູນຄິດວ່າຈະເຮັດໃຫ້ພຣະເຈົ້າພໍພຣະທັຍ ພຣະອົງບໍ່ໄດ້ຄິດເລີຍວ່າຕົນເອງບໍ່ໄດ້ເຊື່ອຟັງພຣະເຈົ້າ ຄໍາສັ່ງທີ່ບອກໃຫ້ລໍຖ້າຊາມູເອນວ່າ ກັບມາແລ້ວຈຶ່ງທໍາພິທີເຜົາເຄື່ອງຖວາຍບູຊາ. ພວກເຮົາບໍ່ສາມາດເຮັດໃຫ້ພຣະເຈົ້າພໍພຣະທັຍໄດ້ນອກເໜືອໄປຈາກການເຊື່ອຟັງພຣະອົງ.

ໃນທີ່ສຸດ, ເຖິງຢ່າງໃດກໍຕາມຊາອູນຍອມຮັບວ່າໄດ້ເຮັດຜິດ, ພຣະອົງຍັງເບິ່ງຄືວ່າມັນເປັນການຖືກຕ້ອງແລ້ວ. ຊາມູເອນເວົ້າວ່າມັນເປັນການໂງ່ຈ້າວທີ່ສຸດທີ່ເຮັດຢ່າງນັ້ນ ພຣະອົງບໍ່ໄດ້ເຊື່ອຟັງຄໍາສັ່ງຂອງພຣະຜູ້ເປັນເຈົ້າ. ຊາມູເອນໄດ້ປະກາດວ່າພຣະເຈົ້າຈະປົດຊາອູນອອກຈາກບັນລັງແລ້ວພຣະເຈົ້າຈະສົ່ງຊາຍຜູ້ນຶ່ງທີ່ພຣະອົງພໍພຣະທັຍແລະເປັນຜູ້ທີ່ເຊື່ອຟັງມາປົກຄອງໄພ່ພົນຂອງພຣະອົງ.

## 2. <u>ການເລືອກຂອງເຂົາ</u> 1 ຊາມູເອນ 16:6-10

ພຣະເຈົ້າໄດ້ຊົງປົດກະສັດຊາອູນອອກຈາກການເປັນກະສັດດ້ວຍການທີ່ໄດ້ກະທະຜິດ. ຊາມູເອນໄດ້ຊອກຫາຄົນຜູ້ທີ່ມີຄວາມຈິງຮັກພັກດີຕໍ່ພຣະເຈົ້າ(1ຊາມູເອນ 13:14). ການຊອກຫາຢ່າງທີ່ຖ້ວນໃນເມືອງເບດເລເຮັມແລະໃນຄອບຄົວອີຊາຍ(1 ຊາມູເອນ 16:1). ຊາມູເອນໄດ້ເອີ້ນລູກຊາຍຂອງອີຊາຍແຕ່ລະຄົນອອກມາຢູ່ຕໍ່ໜ້າແລະກໍຄິດໃນໃຈວ່າແມ່ນຜູ້ໃດ, ຕາມການເບິ່ງແຕ່ສິ່ງທີ່ຢູ່ຂ້າງນອກ.

ທໍາອິດ ຊາມູເອນໄດ້ເຫັນເອລີອາດຜູ້ທີ່ມີຮູບຮ່າງສູງສະງ່າແລະໜ້າຕາດີຈົບງາມ. ລາວໄດ້ເປັນຜູ້ທີນຶ່ງທີ່ຊາມູເອນໄດ້ເລືອກທີ່ຈະໃຫ້ເປັນກະສັດ, ແຕ່ພຣະເຈົ້າໄດ້ແກ້ການເລືອກຂອງລາວ. ພຣະຜູ້ເປັນເຈົ້າໄດ້ກ່າວແກ່ລາວວ່າ: ຢ່າສົນໃຈນໍາຮູບຮ່າງອັນຈົບງາມຂອງລາວແຕ່ຈົ່ງເບິ່ງພາຍໃນຈິດໃຈຂອງລາວ.

ອີຊາຍບໍ່ໄດ້ຂັດຂວາງການທີ່ພຣະເຈົ້າປະຕິເສດເອລີອາບ. ລາວໄດ້ເອີ້ນລູກຊາບຜູ້ທີສອງອາບີນາດາບອອກມາໃຫ້ຊາມູເອນເບິ່ງອີກ. ພຣະເຈົ້າໄດ້ເປີດເຜີຍໃຫ້ຊາມູເອນຮູ້ອີກວ່າອາບີນາດາບກໍບໍ່ແມ່ນ. ອີຊາຍເອີ້ນລູກຜູ້ຕໍ່

ໄປຄືຊາມມານາອີກ, ແຕ່ລາວກໍບໍ່ແມ່ນຜູ້ທີ່ພຣະເຈົ້າຊົງເລືອກ. ການເລືອກໄດ້ສືບຕໍ່ໄປທັງໝົດເຈັດຄົນ, ແຕ່ລະຄົນບໍ່ແມ່ນຜູ້ທີ່ພຣະເຈົ້າຊົງເລືອກ. ປາກົດວ່າອີຊາຍບໍ່ໄດ້ເອົາລູກຊາຍຫຼ້າຂອງລາວມາຄືດາວິດ ຜູ້ທີ່ຖືກແຕ່ງຕັ້ງໃຫ້ເປັນກະສັດໃຫ້ມາເລືອກເທື່ອ. ລາວໄດ້ໃຫ້ລູກຊາຍທັງເຈັດຄົນຜ່ານໄປແຕ່ບໍ່ມີຜູ້ໃດຖືກພຣະເຈົ້າຊົງເລືອກ.

ໃນເມື່ອພວກເຮົາຈະເລືອກຜູ້ໃດຜູ້ນຶ່ງ, ພວກເຮົາຄວນເບິ່ງຜ່ານສິ່ງທີ່ຢູ່ຂ້າງນອກເຂົ້າໄປເຖິງແນວຄິດຈິດໃຈແລະນ້ຳພຣະທັຍຂອງພຣະເຈົ້າໃນເຂົາອີກດ້ວຍ. ແນ່ນອນພຣະເຈົ້າຈະໃຫ້ຄວາມຮູ້ສຶກບາງຢ່າງທີ່ຈະຊ່ວຍພວກເຮົາເລືອກ, ແຕ່ກໍບໍ່ສາມາດຈະເຂົ້າໃຈຜິດໄດ້. ພວກເຮົາບໍ່ສາມາດເລືອກຕາມຄວາມຮູ້ສຶກຂອງເຮົາເທົ່ານັ້ນ. ໃນເມື່ອພວກເຮົາມີການເລືອກທີ່ສຳຄັນພວກເຮົາຕ້ອງໄດ້ຍິນພຣະສຸຣະສຽງຈາກພຣະເຈົ້າກ່ອນ. ເພາະວ່າ, ໃນຂະນະທີ່ມະນຸດເບິ່ງເຫັນແຕ່ສິ່ງທີ່ຢູ່ຂ້າງນອກ ພຣະເຈົ້າໄດ້ເຫັນຂ້າງໃນ. ຈິດໃຈຂອງດາວິດ. ດາວິດວາງໃຈໃນພຣະເຈົ້າ, ພຣະເຈົ້າເຫັນຢ່າງບໍຣິບູນໃນຈິດໃຈຂອງລາວ. ຜູ້ຄົນສ່ວນຫຼາຍມັກຈະມີບັນຫາໃນຄວາມສາມາດທີ່ຈະເປັນໄດ້ ເພາະວ່າພວດເຂົາໄດ້ຟັງຄວາມຂອງຄົນທີ່ບໍ່ສາມາດພິສູດເຖິງຂ້າງໃນຈິດໃຈຂອງເຂົາ.

### 3. <u>ການເລືອກຂອງພຣະເຈົ້າ</u> 1 ຊາມູເອນ 16:11-13

ຊາມູເອນໄດ້ຖາມອີຊາຍ, **ທ່ານຍັງມີລູກຊາຍອີກຢູ່ບໍ່**? ອີຊາຍໄດ້ຍອມຮັບວ່າຍັງມີລູກຊາຍອີກຜູ້**ຍັງນ້ອຍ**ຢູ່ແຕ່ດຽວນີ້ລາວຍັງ**ໄປລ້ຽງແກະ**ຢູ່. ໃນຄວາມຄິດຂອງອີຊາຍ, ຊາມູເອນໄດ້ປະຕິເສດລູກຊາຍທີ່ບໍ່ມີຄຸນວຸດທິ, ແຕ່ແລ້ວເປັນຫຍັງເພິ່ນຈຶ່ງເລືອກເອົາລູກຜູ້ຫຼ້າ? ດ້ວຍເຫດໃດລາວຈຶ່ງໄດ້ເລືອກເອົາລູກຜູ້ນ້ອຍ? ເຖິງຢ່າງໃດກໍດີ, ພຣະຜູ້ເປັເຈົ້າໄດ້ເບິ່ງເຫັນໃນສ່ວນເລິກຂອງຈິດໃຈດາວິດວ່າລາວຈະສາມາດເປັນຜູ້ນຳໄພ່ພົນຂອງພຣະອົງ.

ຄົນເຮົາສ່ວນຫຼາຍແລ້ວຈະຄິດເອົາເອງວ່າເຮົາບໍ່ມີຄຸນສົມບັດພຽງພໍທີ່ຈະຮັບໃຊ້ພຣະເຈົ້າ. ສ່ວນຫຼາຍແລ້ວພວກເຮົາກໍຕັດສິນກັນໃນທຳນອງນີ້. ເຮົາເຫັນຄົນໃດຄົນນຶ່ງເປັນຄົນຂີ້ອາຍແລ້ວກໍຄິດວ່າລາວຈະບໍ່ມີໂອກາດໄດ້ຮັບໃຊ້ພຣະເຈົ້າ.ແຕ່ວ່າຄົນໆນັ້ນພັດເປັນຄົນທີ່ພຣະເຈົ້າຊົງເລືອກໄວ້ໃຫ້ເປັນພະຍານທີ່ດີໂດຍຣິດອຳນາດຂອງພຣະອົງ. ດັ່ງນັ້ນສິ່ງທີ່ປາກົດຢູ່ພາຍນອກບໍ່ໄດ້ບົ່ງບອກໃຫ້ເຫັນທຸກສິ່ງທັງໝົດໃນຕົວຂອງຜູ້ນັ້ນ.

ຊາມູເອນໄດ້ບອກໃຫ້ອີຊາຍນຳເອົາລູກຊາຍຜູ້ນ້ອຍນັ້ນມາຫາລາວແລະສັ່ງບໍ່ໃຫ້ໃຜຄົນໃດຄົນນຶ່ງນັ່ງລົງກິນແລະດື່ມຈົນກວ່າລູກຜູ້ນ້ອຍນັ້ນຈະມາຮອດ. ເຖິງແມ່ນວ່າບໍ່ແມ່ນການເລືອກຂອງຊາມູເອນຫຼືອີຊາຍກໍດີແຕ່ເປັນການຊົງເລືອກເອົາຂອງພຣະເຈົ້າ. ເມື່ອພຣະເຈົ້າຊົງສັນຍາວ່າລູກຂອງອີຊາຍຈະເປັນກະສັດຜູ້ຕໍ່ໄປ, ດັ່ງນັ້ນຊາມູເອນຈຶ່ງບໍ່ຊັກຊ້າໃນການຕັດສິນໃຈແລະລໍຖ້າຈົນກວ່າລາວຈະໄດ້ພົບລູກຜູ້ຫຼ້າ.

ເມື່ອດາວິດມາເຖິງ, ຊາມູເອນໄດ້ສັງເກດເຫັນວ່າລາວເປັນຊາຍທີ່ມີຮູບຮ່າງງົດງາມແລະມີສຸກຂະພາບແຂງແຮງດີແລະຕາຂອງລາວກໍມີແວວ(ສລາດ). ຢ່າງໃດກໍຕາມບໍ່ແມ່ນຄວາມງົດງາມຮູບຮ່າງພາຍນອກຂອງລາວແຕ່ພຣະເຈົ້າໄດ້ຊົງສັງເກດທັນເຖິງຈິດໃຈທາງໃນຂອງລາວ.

ຢູ່ໃນຄຣິສຕະຈັກກໍຕ້ອງການມີຜູ້ຮັບໃຊ້. ຜູ້ແບ່ງປັນພຣະທັມແລະຜູ້ບໍຣິຫານພາຍໃນຄຣິສຕະຈັກໃນປີຕໍ່ມາ. ຈົ່ງຈຳໄວ້ວ່າຢ່າໄດ້ເບິ່ງແຕ່ສິ່ງທີ່ປາກົດໃຫ້ເຫັນແຕ່ພາຍນອກຂອງຜູ້ໃດຜູ້ນຶ່ງເທົ່ານັ້ນ. ຈົ່ງເບິ່ງຕົວທ່ານເອງເໝືອນກັນພຣະເຈົ້າໄດ້ສັງເກດເບິ່ງທ່ານ; ພຣະເຈົ້າຮຽກເອີ້ນເອົາທ່ານໃຫ້ມາຮັບໃຊ້ໃນຈຸດປະສົງອັນໃດ? ທ່ານຄວນຈະຊອກຄົ້ນໃຫ້ພົບ(ຂອງພຣະຣາຊທານ)ໃນຕົວທ່ານເອງ.

ຊາມູເອນໄດ້ເອີ້ນເອົາດາວິດໃຫ້ເຂົ້າມາຫາເພິ່ນແລ້ວເອົານ້ຳມັນຊະໂລມມາທົດສົງດາວິດ, ການກະທຳດັ່ງກ່າວເປັນສັນຍາລັກໃນການສະຖາປະນາຕໍ່ໜ້າອົງພຣະຜູ້ເປັນເຈົ້າ. ແມ່ນພຣະອົງໄດ້ໃຫ້ສິດລາວໃນການເປັນກະສັດ. ເຖິງແມ່ນດາວິດເປັນລູກຫຼ້າແລະມີຄຸນສົມບັດໜ້ອຍທີ່ສຸດ, ແຕ່ສຳລັບພຣະເຈົ້າແລ້ວພຽງພໍໃນການຮັບໃຊ້ພຣະອົງ. ເພາະວ່າພຣະເຈົ້າໄດ້ກະຕຽມແລະນຳພາພວກເຂົາໃນການຮັບໃຊ້. ມີຫຼາຍຄົນບໍ່ກ້າທີ່ຈະຮັບໃຊ້ຄຣິສຕະຈັກ, ຄິດວ່າ

ຕົນເອງບໍ່ມີຄຸນວຸດທິພຽງພໍ. ເ ຖິງຢ່າງໃດກໍຕາມພຣະເຈົ້າຈະລໍຖ້າໃນການຕອບສນອງຕໍ່ການຮຽກເອີ້ນຂອງພຣະອົງ, ການເລືອກຂອງພຣະອົງນັ້ນບໍ່ເໝືອນການເລືອກຂອງມະນຸດ.

## ຜູ້ຮັບໃຊ້ຈະມີເງື່ອນໄຂອັນໃດແດ່?

* ບໍ່ແມ່ນການປາກົດການຂ້າງນອກຫຼືຄວາມສຳເຣັດໃນໂລກນີ້.
* ບໍ່ແມ່ນເປັນຄົນບໍ່ມີຄວາມບາບ ແຕ່ເປັນຄົນໄດ້ຮັບການໃຫ້ອະພັຍ.
* ບໍ່ແມ່ນດ້ວຍການສມັກ ແຕ່ເປັນການຮຽກເອີ້ນຂອງພຣະເຈົ້າ.
*ບໍ່ແມ່ນຄວາມສາມາດຂອງຕົນເອງ ແຕ່ແມ່ນການຖວາຍກຽດຕໍ່ພຣະເຈົ້າ.

## <u>ບົດຮຽນແຫ່ງຊີວິດ:</u>

ພວກເຮົາໄດ້ຮຽນຮູ້ຫຍັງແດ່ຈາກບົດຮຽນນີ້?

❖ ເມື່ອພວກເຮົາຫາກບໍ່ຕິດຕາມຂໍ້ຄຳສັ່ງຂອງພຫະເຈົ້າ ພຣະອົງກໍຈະສັບປ່ຽນເຮົາອອກຈາກທີ່ຂອງເຮົາໄປໄວ້ກັບຄົນທີ່ບໍ່ຟັງຄວາມເໝືອນກັນ.

❖ ເຖິງແມ່ນວ່າພວກເຮົາຄວນຊອກຫາຄວາມຄິດເຫັນຂອງຜູ້ອື່ນຕໍ່ການຕັດສິນໃຈຂອງເຮົາ, ແຕ່ເຮົາກໍຄວນໃຫ້ສິ່ງເຫຼົ່ານັ້ນເປັນທີ່ສິ່ງຜົນສະທ້ອນຕໍ່ການຮັບໃຊ້ວຽກງານຂອງພຣະອົງສຳລັບຊີວິດເຮົາ.

❖ ເມື່ອພຣະເຈົ້າໄດ້ເປີດເຜີຍການຊົງເລືອກຂອງພຣະອົງສຳລັບຊີວິດເຮົາ ພວກເຮົາກໍຄວນຈະເຫັນພ້ອມກັບການຊົງເລືອກນັ້ນດ້ວຍ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ WWW.lsbf.org ໂດຍ LLBC.